ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ກະຊວງສາທາລະນະສຸກ

ເລກທີ 102 /ກຊສ

ນະຄອນຫຼວງວຽງຈັນ ວັນທີ 21 ມັງກອນ 2004

# ຂໍ້ກຳນົດ
# ວ່າດ້ວຍມາດຕະຖານເກືອໄອໂອດີນ

- ອີງໃສ່: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການປະສົມສານໄອໂອດີນໃສ່ເກືອ ເລກທີ 42/ນຍ, ລົງວັນທີ 20 ມີຖຸນາ 1995.
- ອີງໃສ່: ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 020/ນຍ, ລົງວັນທີ 09 ມີນາ 1999
- ອີງໃສ່: ສະພາບການຕົວຈິງ, ການສຳຫລວດພະຍາດຂາດສານໄອໂອດີນ ໃນຊຸມປີຜ່ານມາ ແລະ ການຄົ້ນຄວ້າ, ຄວາມເປັນເອກກະພາບ ທາງດ້ານວິຊາການ ລະຫວ່າງກົມອາຫານແລະຢາ, ກົມອະນາໄມ-ກັນພະຍາດ ແລະ ສູນວິໄຈອາຫານແລະຢາ

**ລັດຖະມົນຕີວ່າການກະຊວງສາທາລະນະສຸກ ອອກຂໍ້ກຳນົດ**
**ວ່າດ້ວຍມາດຕະຖານເກືອໄອໂອດີນ ດັ່ງຕໍ່ໄປນີ້ :**

## ໝວດທີ 1
## ຫຼັກການລວມ

### ມາດຕາ 1. ຈຸດປະສົງ ແລະ ລະດັບຄາດຫມາຍ.

**1. ຈຸດປະສົງ**

ເພື່ອຄວບຄຸມຄຸນນະພາບເກືອໄອໂອດີນ ທີ່ຜະລິດ,ນຳເຂົ້າ ແລະ ຈໍລະຈອນຢູ່ໃນ ສປປລາວ ໃຫ້ບັນລຸມາດຕະຖານ ທີ່ກະຊວງສາທາລະນະສຸກໄດ້ກຳນົດ, ແນ່ໃສ່ເພື່ອສົ່ງເສີມ ແລະປົກປ້ອງສຸຂະພາບ ຂອງຜູ້ບໍ ລິໂພກ.

**2. ລະດັບຄາດຫມາຍ**

ຜູ້ບໍລິໂພກ ໄດ້ຮັບເກືອໄອໂອດີນທີ່ມີຄຸນນະພາບ ມາດຕະຖານ, ແນໃສ່ເພື່ອລົບລ້າງບັນດາ ພະຍາດຂາດສານ ໄອໂອດີນ.

### ມາດຕາ 2. ຄວາມຫມາຍຂອງຄຳສັບ

ເກືອໄອໂອດີນ(ຫລື ເກືອອີອົດ) ແມ່ນ ຜະລິດຕະພັນເກືອທີ່ປຸງແຕ່ງຈາກເກືອທຳມະດາ (ໃນນັ້ນລວມທັງເກືອຕົ້ມ ແລະ ເກືອຕາກ) ປະສົມກັບສານໂປຕາຊຽມໄອໂອເດດ.

## ໝວດທີ 2
## ມາດຕະຖານເກືອໄອໂອດີນ

### ມາດຕາ 3. ມາດຕະຖານເກືອໄອໂອດີນ.

ເກືອໄອໂອດີນ ຕ້ອງປະສົມຕາມມາດຕະຖານ ດັ່ງຕໍ່ໄປນີ້ :

1. ເກືອໄອໂອດີນຕອ້ງມີໂປຕາຊຽມ ຫຼື ໂຊດຽມ ໄອໂອເດດທຽບກັບການບັນຈຸ:

ກ. ບໍ່ຕໍ່າກວ່າ 35 ມິລີກຼາມ ໂປຕາຊຽມ ຫຼື ໂຊດຽມ ໄອໂອເດດຕໍ່ເກືອ 1 ກິໂລ.

ຂ. ບໍ່ສູງກວ່າ 100 ມິລິກຼາມ ໂປຕາຊຽມ ຫຼື ໂຊດຽມ ໄອໂອເດດ ຕໍ່ເກືອ 1 ກິໂລ.

2. ເກືອໄອໂອດີນມີຄຸນລັກສະນະ ເປັນເມັດແຂງ ຫຼື ເປັນຝຸ່ນສີຂາວ, ບໍ່ປົນເປື້ອນກັບຂີ້ເຖົ່າ, ຂີ້ດິນ, ຊາຍ, ຫີນ ຫຼື ປົນເປື້ອນດວ້ຍສິ່ງແປກປົນອື່ນໆ...ແລະ ມີຄຸນລັກສະນະ ດັ່ງລຸ່ມນີ້:

2.1 ຄວາມຊຸ່ມບໍ່ສູງກ່ວາ 4 %w/w

2.2 ຄວາມປົນເປື້ອນທີ່ບໍ່ລະລາຍ ບໍ່ສູງກ່ວາ 1%w/w

2.3 ສິ່ງທີ່ລະລາຍໄດ້(ນອກຈາກ NaCl) ບໍ່ສູງກວ່າ 3%w/w

2.4 ໂຊດຽມກຼໍໄຣ ( NaCl ) ບໍ່ຕໍ່າກ່ວາ 96%w/w

2.5 ມີໄອໂອດີນ:

- ໃນລະຫວ່າງ 40 ຫາ 60 ppm ຢູ່ບ່ອນຜະລິດ ແລະ ດ່ານນໍາເຂົ້າ.
- ບໍ່ຕໍ່າກ່ວາ 20 ppm ຢູ່ບ່ອນຂາຍຍ່ອຍແລະນໍາໃຊ້ໃນຄອບຄົວ.

2.6 ການປົນເປື້ອນ ດ້ວຍສານເຄມີທີ່ເປັນໂລຫະໜັກ ບໍ່ໃຫ້ກາຍ :

ອາກເຊນິກ(As) 0,5 mg/kg; ທອງ(Cu) 2 mg/kg; ກົ່ວ(Pb) 2 mg/kg; ກາດມີອອມ(Cd) 0,5 mg/kg; ນໍ້າບາ (Hg) 0,1 mg/kg.

**ມາດຕາ 4. ການບັນຈຸແລະຫຸ້ມຫໍ່**

ເກືອໄອໂອດີນຕ້ອງບັນຈຸແລະຫຸ້ມຫໍ່ດ້ວຍຖົງຢາງ ທີ່ໄດ້ມາດຕະຖານຕາມຂະໜາດ ທີ່ເຫມາະສົມ ເຊັ່ນ: 500 ກຼາມ, 1 ກິໂລກຼາມ, ຫລີກເວັ້ນການບັນຈຸທີ່ມີບໍລິມາດຂະຫນາດໃຫຍ່, ທັງນີ້ເພື່ອຮັກສາເກືອໃຫ້ໄດ້ຄຸນະພາບ ຕາມມາດຕະຖານທີ່ໄດ້ລະບຸໄວ້ໃນມາດຕາ 3 ຂ້າງເທິງນີ້.

**ມາດຕາ 5. ສະຫຼາກຕິດຖົງຢາງ**

ສະຫລາກຕິດຖົງຢາງທີ່ບັນຈຸເກືອໄອໂອດີນຢ່າງໜ້ອຍ ຕ້ອງມີເນື້ອໃນທີ່ຈໍາເປັນເປັນພາສາ ລາວ ແລະ ພາສາສາກົນ ດັ່ງຕໍ່ໄປນີ້:

1. ຊື່: ເກືອໄອໂອດີນ ,
2. ຊື່: ຜູ້ຜະລິດຫລືໂຮງງານ ແລະ ເຄື່ອງໝາຍການຄ້າສະເພາະ ທີ່ທາງການຮັບຮອງ.
3. ເລກທະບຽນ ທີ່ອອກໃຫ້ໂດຍ ກົມອາຫານ ແລະຢາ
4. ວັນ,ເດືອນ,ປີ ຂອງຊຸດຜະລິດ
5. ນໍ້າໜັກຂອງເກືອຢູ່ໃນຖົງ
6. ປະລິມານສານໄອໂອດີນທີ່ໄດ້ປະສົມໃສ່( ppm ຫລື mg/kg)

**ມາດຕາ 6. ການເກັບມ້ຽນແລະການຂົນສົ່ງ**

ເກືອໄອໂອດີນຕອ້ງເກັບມ້ຽນຮັກສາຢູ່ໃນເງື່ອນໄຂ ລຸ່ມນີ້:

- ສະຖານທີ່ແຫ້ງ, ອາກາດປອດໂປ່ງ.
- ບໍ່ໄວ້ໃກ້ເຕົາໄຟ ແລະ ບໍ່ຕາກແດດ;
- ບໍ່ຖືກຊຸມປຽກ; ບໍ່ຖືກນໍ້າຫລືນໍ້າຝົນ;
- ປາສະຈາກການປົນເປື້ອນຈາກຂີ້ຝຸ່ນແລະສານເຄມີ;

## ໝວດທີ 03

## ການເກືອດຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 7. ການເກືອດຫ້າມ**

ຫ້າມຜະລິດ, ນໍາເຂົ້າ-ສົ່ງອອກ, ຈໍາຫນ່າຍ ແລະ ແຈກຢາຍເກືອທີ່ບໍ່ບັນລຸມາດຕະຖານ ຕາມໝວດ ທີ່ 2; ມາດຕາ 3, 4, 5 ແລະ 6 ຂອງກົດຫມາຍສະບັບນີ້.

**ມາດຕາ 8. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້, ຈະໄດ້ຮັບການຍ້ອງຍໍ ແລະປະຕິບັດນະໂຍບາຍຕ່າງໆຊຶ່ງລັດຖະບານເປັນຜູ້ກຳນົດລະອຽດ.

**ມາດຕາ 9. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ຜູ້ຜະລິດ, ຜູ້ນຳເຂົ້າ ແລະ ຂາຍຍ່ອຍທີ່ໄດ້ລະເມີດຂໍ້ກຳນົດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ແລະ ລົງໂທດຕາມກຳລະນີຫນັກ ຫຼື ເບົາ ດັ່ງລາຍ ລະອຽດລຸ່ມນີ້:

1. ຜູ້ລະເມີດຄັ້ງທີ່ 1

ຜູ້ທີ່ລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ບັນທຶກໄວ້ໃນປື້ມຕິດຕາມ.

2. ຜູ້ລະເມີດຄັ້ງທີ່ 2

ຜູ້ທີ່ລະເມີດຈະຖືກຍຶດສິນຄ້າ ແລະ ປັບໃໝ 10% ຂອງມູນຄ່າສິນຄ້າຕາມທ້ອງຕະຫລາດ ແລະ ບັນທຶກໄວ້ໃນປື້ມຕິດຕາມ.

3. ຜູ້ລະເມີດຄັ້ງທີ່ 3

ຜູ້ທີ່ລະເມີດ ຈະຖືກຍຶດສິນຄ້າ ແລະ ປັບໃໝສອງເທົ່າຂອງມູນຄ່າສິນຄ້າ ຕາມທ້ອງຕະຫຼາດ, ບັນທຶກ ໄວ້ໃນປື້ມຕິດຕາມ ຫລື/ແລະ ນຳສະເຫນີຕໍ່ຂະແຫນງການກ່ຽວຂ້ອງໂຈະ ຫຼື ປິດໂຮງງານ/ບໍລິສັດ/ຮ້ານຄ້າ ຕາມກໍລະນີຫນັກ ຫລື ເບົາ.

**ໝວດທີ 4**

**ບົດບັນຍັດສຸດທ້າຍ**

**ມາດຕາ 10. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອາຫານແລະຢາ, ກົມອະນາໄມກັນພະຍາດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

**ມາດຕາ 11. ຜົນສັກສິດ**

ຂໍ້ກຳນົດວ່າດ້ວຍມາດຖານເກືອໄອໂອດີນສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດສະບັບນີ້ ປ່ຽນແທນມາດຕະຖານເກືອໄອໂອດີນ ສະບັບເລກທີ 1029/ກຊສ, ລົງວັນທີ

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ກະຊວງ ສາທາລະນະສຸກ

ລັດຖະມົນຕີ

ດຣ. ປອນເມກ ດາລາລອຍ